**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ........../ລບ

ນະຄອນຫຼວງວຽງຈັນ, ວັນທີ........................

# (ຮ່າງສະບັບ ວັນທີ 05/02/2025)
# ດຳລັດ
# ວ່າດ້ວຍການຫັນເປັນດີຈິຕອນ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ (ສະບັບປັບປຸງ) ສະບັບເລກທີ 31/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ໜັງສືສະເໜີ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ........./ກຕສ, ລົງວັນທີ....

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານການຫັນເປັນດີຈິຕອນ ເພື່ອສົ່ງເສີມການຫັນເປັນລັດຖະບານດີຈິຕອນ, ເສດຖະກິດດີຈິຕອນ ແລະ ສັງຄົມດີຈິຕອນ ແນໃສ່ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນວຽກງານຂອງພາກລັດ, ພາກທຸລະກິດ ແລະ ສັງຄົມ ໃຫ້ກວ້າງຂວາງ ຮັບປະກັນຄວາມປອດໄພ, ຄວາມໝັ້ນຄົງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການຫັນເປັນດີຈິຕອນ

ການຫັນເປັນດີຈິຕອນ ແມ່ນ ຂະບວນການຫັນປ່ຽນ ຫຼື ປ່ຽນແປງວິທີການດຳເນີນງານ ຈາກຮູບແບບດັ້ງເດີມ ໄປສູ່ຮູບແບບໃໝ່ ໂດຍນຳໃຊ້ເຕັກໂນໂລຊີດີຈິຕອນ ເປັນເຄື່ອງມືຂັບເຄື່ອນການຜະລິດ, ການບໍລິການ ແລະ ການຄຸ້ມຄອງ ໃນຂົງເຂດວຽກງານຂອງການບໍລິຫານລັດ, ເສດຖະກິດ, ສັງຄົມ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ເຕັກໂນໂລຊີດີຈິຕອນ ໝາຍເຖິງ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ທັນສະໄໝ;
2. ທັກສະດີຈິຕອນ ໝາຍເຖິງ ການມີທັກສະພື້ນຖານ ແລະ ຄວາມຮູ້ຄວາມສາມາດ ໃນການນຳໃຊ້ຄອມພິວເຕີ ແລະ ອຸປະກອນດີຈິຕອນ ໃນການເຊື່ອມຕໍ່ອິນເຕີເນັດ ເພື່ອຮັບໃຊ້ການດຳລົງຊີວິດ ແລະ ວຽກງານ ຕະຫຼອດເຖິງການມີທັກສະຂັ້ນສູງທີ່ມີຄວາມສາມາດໃນການພັດທະນາຂອບແວຕ່າງໆ ແລະ ສາມາດເຂົ້າໃຈເລິກເຊິ່ງ ປະຍຸກ ໝູນໃຊ້ ເຕັກໂນໂລຊີໃຫ້ເກີດປະໂຫຍດສູງສຸດ ໂດຍບໍ່ສ້າງຜົນກະທົບດ້ານລົບຕໍ່ຜູ້ອື່ນ;
3. ລະບົບຕ່ອງໂສ້ການສະໜອງ (Supply Chain) ໝາຍເຖິງ ເຄືອຂ່າຍຂອງບຸກຄົນ, ອົງການຈັດຕັ້ງ, ຊັບພະຍາກອນ, ກິດຈະກຳ ແລະ ເຕັກໂນໂລຊີ ທີ່ກ່ຽວຂ້ອງກັບການສ້າງ, ການຜະລິດ ແລະ ການຂາຍຫຼືບໍລິການ. ລວມເອົາທຸກສິ່ງທຸກຢ່າງຕັ້ງແຕ່ການຈັດສົ່ງວັດຖຸດິບຈາກຜູ້ສະໜອງໄປຫາຜູ້ຜະລິດຈົນເຖິງການຈັດສົ່ງໄປຍັງຜູ້ໃຊ້;
4. ການບົ່ມເພາະ (incubation) ໝາຍເຖິງ ຂະບວນການສະໜັບສະໜູນການເລີ່ມຕົ້ນທຸລະກິດໃນຂັ້ນຕົ້ນເພື່ອພັດທະນາທຸລະກິດ ແລະ ນຳເອົາຜະລິດຕະພັນຂອງຕົນອອກສູ່ຕະຫຼາດໄວຂຶ້ນ. ສະໜອງໃຫ້ມີການເຂົ້າເຖິງຊັບພະຍາກອນ ເຊັ່ນ ຫ້ອງການ, ການໃຫ້ຄຳປຶກສາ ແລະ ການສະໜອງທຶນ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານການຫັນເປັນດີຈິຕອນ**

ລັດ ໃຫ້ຄວາມສຳຄັນແກ່ວຽກງານຫັນເປັນດີຈິຕອນ ດ້ວຍການກຳນົດນະໂຍບາຍ, ລະບຽບການ, ພັດທະນາລະບົບໂຄງລ່າງພື້ນຖານໂທລະຄົມມະນາຄົມ, ລະບົບຖານຂໍ້ມູນແຫ່ງຊາດ, ຖານຂໍ້ມູນຂອງຂະແໜງການ, ລະບົບບໍລິການດີຈິຕອນ, ພັດທະນາບຸກຄະລາກອນ, ສະໜອງງົບປະມານ ແລະ ວັດຖຸປະກອນທີ່ຈຳເປັນ ເຂົ້າໃນວຽກງານການຫັນເປັນດີຈິຕອນຂອງອົງການຈັດຕັ້ງລັດ.

ລັດ ຊຸກຍູ້ ແລະ ສົ່ງເສີມ ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນວຽກງານການບໍລິຫານ ແລະ ບໍລິການລັດ, ການຜະລິດ, ການຄ້າ, ການບໍລິການ, ການຂົນສົ່ງ, ການພັດທະນາເສດຖະກິດ ແລະ ຮັບໃຊ້ສັງຄົມ.

ລັດ ເອົາໃຈໃສ່ ໂຄສະນາເຜີຍແຜ່ ໃຫ້ສັງຄົມ ຮັບຮູ້, ເຂົ້າໃຈ ແລະ ຫັນປ່ຽນຈິນຕະນາການ ໃຫ້ມີຄວາມເຊື່ອໝັ້ນຕໍ່ການຫັນເປັນດີຈິຕອນ, ໝູນໃຊ້ທ່າແຮງທີ່ບົ່ມຊ້ອນ ເພື່ອພັດທະນາເສດຖະກິດດີຈິຕອນ ແລະ ສັງຄົມດີຈິຕອນ.

**ມາດຕາ 5 ຫຼັກການກ່ຽວກັບການຫັນເປັນດີຈິຕອນ**

ການຫັນເປັນດີຈິຕອນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບປະກັນຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ;
3. ພັດທະນາການຫັນເປັນລັດຖະບານດີຈິຕອນ, ເສດຖະກິດດີຈິຕອນ ແລະ ສັງຄົມດີຈິຕອນຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ;
4. ຮັບປະກັນການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ຢ່າງປອດໄພ ແລະ ສ້າງຜົນປະໂຫຍດສູງສຸດ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານການຫັນເປັນດິຈິຕອນ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການຫັນເປັນດິຈິຕອນ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການສຶກສາ, ການພັດທະນາຊັບພະຍາກອນມະນຸດ ແລະ ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ການຫັນເປັນດິຈິຕອນ

### ໝວດທີ 1
### ເສົາຄ້ຳຂອງການຫັນເປັນດິຈິຕອນ

**ມາດຕາ 8 ເສົາຄ້ຳຂອງການຫັນເປັນດິຈິຕອນ**

ການຫັນເປັນດິຈິຕອນປະກອບມີສາມເສົາຄ້ຳດັ່ງນີ້:

1. ລັດຖະບານດິຈິຕອນ;
2. ເສດຖະກິດດິຈິຕອນ;
3. ສັງຄົມດິຈິຕອນ.

**ມາດຕາ 9 ລັດຖະບານດິຈິຕອນ**

ລັດຖະບານດິຈິຕອນ ແມ່ນ ການນຳໃຊ້ ເຕັກໂນໂລຊີດິຈິຕອນ ເຂົ້າໃນການບໍລິຫານ ແລະ ບໍລິການລັດ ເພື່ອເພີ່ມປະສິດທິພາບຂອງ ການບໍລິຫານ ແລະ ບໍລິການລັດ ໃຫ້ແກ່ ພາກລັດ, ພາກທຸລະກິດ ແລະ ປະຊາຊົນ ໃຫ້ມີຄວາມ ສະດວກ, ທັນສະໄໝ, ວ່ອງໄວ, ໂປ່ງໃສ, ແລະ ຮັບປະກັນຄວາມປອດໄພ

**ມາດຕາ 10 ເສດຖະກິດດິຈິຕອນ**

ເສດຖະກິດດິຈິຕອນ ແມ່ນ ເສດຖະກິດຮູບແບບໃໝ່ ບົນພື້ນຖານການນຳໃຊ້ເຕັກໂນໂລຊີດິຈິຕອນ ເປັນເຄື່ອງມືໃນການຂັບເຄື່ອນ, ເພີ່ມປະສິດທິພາບ ແລະ ປະສິດທິຜົນ ຂອງວຽກງານທັງພາກລັດ ແລະ ເອກະຊົນ, ສ້າງມູນຄ່າເພີ່ມໃຫ້ແກ່ການຜະລິດ, ການຄ້າ ແລະ ການບໍລິການ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

**ມາດຕາ 11 ສັງຄົມດິຈິຕອນ**

ສັງຄົມດິຈິຕອນ ແມ່ນ ສັງຄົມຮູບແບບໃໝ່ ທີ່ມີການປະສົມປະສານ ເຕັກໂນໂລຊີດິຈິຕອນ ແລະ ນະວັດຕະກຳ ເຂົ້າໃນທຸກດ້ານຂອງການດຳລົງຊີວິດ ບົນພື້ນຖານສັງຄົມມະນຸດເຂົ້າເຖິງການເຊື່ອມຕໍ່, ສາມາດພົວພັນກັນ ແລະ ມີການພັດທະນາທັກສະດ້ານດິຈິຕອນ ໃຫ້ສາມາດນຳໃຊ້ບັນດາບໍລິການທາງດ້ານດິຈິຕອນໄດ້.

### ໝວດທີ 2

## ການຫັນເປັນລັດຖະບານດີຈິຕອນ

### ມາດຕາ 12 ການຫັນເປັນລັດຖະບານດີຈິຕອນ

ການຫັນເປັນລັດຖະບານດີຈິຕອນແມ່ນຂະບວນການນໍາໃຊ້ເຕັກໂນໂລຊີດີຈິຕອນ ເພື່ອປັບປຸງປະສິດທິພາບ, ປະສິດທິຜົນ ແລະ ຄວາມໂປ່ງໃສຂອງການບໍລິການຂອງລັດຖະບານ ລັດຊຸກຍູ້ສົ່ງເສີມ ໃຫ້ທຸກຂະແໜງການນັບແຕ່ສູນກາງຮອດທ້ອງຖິ່ນ ຫັນເປັນດີຈິຕອນ, ການຫັນເປັນລັດຖະບານດີຈິຕອນປະກອບດ້ວຍລະບົບບໍລິຫານລັດແບບດີຈິຕອນ ແລະ ການບໍລິການລັດແບບດີຈິຕອນ.

ສໍາລັບ ການບໍລິຫານ ແລະ ບໍລິການລັດ ແບບດີຈິຕອນ ໃຫ້ປະຕິບັດຕາມດໍາລັດ ວ່າດ້ວຍການບໍລິຫານ ແລະ ບໍລິການລັດ ແບບດີຈິຕອນ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

### ມາດຕາ 13 ລະບົບບໍລິຫານລັດແບບດີຈິຕອນ

ການບໍລິຫານລັດແບບດີຈິຕອນແມ່ນການນໍາໃຊ້ເຕັກໂນໂລຊີດີຈິຕອນ ຂອງອົງການຈັດຕັ້ງລັດ ເຂົ້າໃນການບໍລິຫານວຽກງານຂອງຕົນ ເພື່ອເພີ່ມປະສິດທິພາບ ຂອງການບໍລິຫານລັດ ໃຫ້ມີຄວາມສະດວກ, ທັນສະໄໝ, ວ່ອງໄວ, ຖືກຕ້ອງ ແລະ ໂປ່ງໃສ.

### ມາດຕາ 14 ການບໍລິການລັດແບບດີຈິຕອນ

ການບໍລິການລັດແບບດີຈິຕອນແມ່ນ ການນໍາໃຊ້ເຕັກໂນໂລຊີດີຈິຕອນ ເຂົ້າໃນການບໍລິການລັດ ເພື່ອເພີ່ມປະສິດທິພາບຂອງການບໍລິການລັດ, ມີຄວາມສະດວກ, ທັນສະໄໝ, ວ່ອງໄວ, ຖືກຕ້ອງ, ໂປ່ງໃສ ແລະ ທົ່ວເຖິງ.

## ໝວດທີ 3
## ການຫັນເປັນເສດຖະກິດດີຈິຕອນ

### ມາດຕາ 15 ການຫັນເປັນດີຈິຕອນຂອງທຸລະກິດ

ການຫັນເປັນດີຈິຕອນຂອງທຸລະກິດແມ່ນຂະບວນການຂອງການນໍາໃຊ້ເຕັກໂນໂລຊີດີຈິຕອນ ມາປັບປຸງຂະບວນການເຮັດທຸລະກິດ, ການບໍລິຫານຈັດການ, ເພີ່ມຄຸນນະພາບ ແລະ ປະສິດຕິພາບ, ອໍານວຍຄວາມສະດວກແກ່ຜູ້ບໍລິໂພກ, ຂະຫຍາຍຖານລູກຄ້າ ແລະ ສ້າງຄວາມເຂັ້ມແຂງ ເພື່ອໃຫ້ສາມາດແຂ່ງຂັນກັນກັບສາກົນຢູ່ໃນຍຸກເສດຖະກິດປັດຈຸບັນ.

ການຫັນເປັນດີຈິຕອນຂອງທຸລະກິດໃຫ້ກໍານົດເປົ້າຫມາຍ ແລະ ຈຸດປະສົງທີ່ຕ້ອງການບັນລຸການຫັນເປັນດີຈິຕອນໃຫ້ຊັດເຈນເປັນຕົ້ນ: ການປັບປຸງປະສິດທິພາບການດໍາເນີນງານຂອງທຸລະກິດ, ສ້າງຄວາມເພິ່ງພໍໃຈໃຫ້ແກ່ຜູ້ຊົມໃຊ້, ນໍາໃຊ້ເຕັກໂນໂລຊີເຂົ້າໃນຂະບວນການຜະລິດ ຫຼື ບໍລິການໃຫມ່ ຈາກນັ້ນໃຫ້ເລີ່ມສ້າງແຜນການ ເພື່ອບັນລຸເປົ້າໝາຍເຫຼົ່ານັ້ນ

ກໍານົດແຜນຈັດຕັ້ງປະຕິບັດ ຫຼັງຈາກນັ້ນກໍ່ໃຫ້ມີການປະເມີນຄວາມສາມາດດີຈິຕອນ, ຈຸດແຂງ-ຈຸດອ່ອນ ໃນປັດຈຸບັນ ເພື່ອວາງແຜນການລົງທຶນ ຫຼື ໝູນໃຊ້ເທັກໂນໂລຊີດີຈິຕອນທີ່ເໝາະສົມໃນຈຸດທີ່ຕ້ອງການປັບປຸງ ຈາກນັ້ນກໍ່ໃຫ້ຕິດຕາມຄວາມຄືບຫນ້າ ແລະ ປະເມີນຜົນໄດ້ຮັບ ເປັນແຕ່ລະໄລຍະຕາມຄວາມເໝາະສົມຂອງແຕ່ລະຫົວໜ່ວຍທຸລະກິດ

**ມາດຕາ 16 ທຸລະກິດສະຕາດອັບ**

ທຸລະກິດສະຕາດອັບ (Startup) ແມ່ນຜູ້ປະກອບການກຸ່ມໃໝ່ ທີ່ມີສັກກະຍະພາບ ແລະ ອາດມີຄວາມສາມາດເຕີບໂຕຂະຫຍາຍຕົວຢ່າງວ່ອງໄວແບບກ້າວກະໂດດ ຫາກປະສົບຜົນສໍາເລັດ, ທຸລະກິດສະຕາດອັບສ່ວນໃຫຍ່ແມ່ນມີລັກສະນະຍັງຢູ່ໃນຂັ້ນຕອນການລິເລີ່ມ ຫຼື ເລີ່ມຕົ້ນການພັດທະນາ ມີລັກສະນະເປັນຜະລິດຕະພັນ ຫຼື ບໍລິການ ໂດຍນໍາໃຊ້ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ເພື່ອມາປະຍຸກສ້າງທຸລະກິດໃຫ້ເຕີບໂຕຢ່າງວ່ອງໄວ ຈຶ່ງເປັນກຸ່ມທຸລະກິດແຫ່ງອານາຄົດທີ່ສໍາຄັນໃນການ ພັດທະນາ ແລະ ຂັບເຄື່ອນລະບົບເສດຖະກິດຂອງຂອງຊາດ

ລັດຖະບານສົ່ງເສີມການສ້າງທຸລະກິດແບບສະຕາດອັບ ໂດຍມີນະໂຍບາຍໃນການສົ່ງເສີມຊ່ວຍເຫຼືອດ້ານຖານຄວາມຮູ້ວິຊາການ, ຊ່ວຍໃຫ້ສາມາດເຂົ້າເຖິງແຫຼ່ງທຶນ, ພັດທະນາພື້ນຖານໂຄງລ່າງ, ການນໍາໃຊ້ເຕັກໂນໂລຊີທັນສະໄໝ, ຊັບພະຍາກອນທີ່ຈໍາເປັນ, ສ້າງກົນໄກທີ່ຈະຊ່ວຍເອື້ອອໍານວຍຄວາມສະດວກໃຫ້ແກ່ທຸລະກິດສະຕາດອັບສາມາດເກີດຂຶ້ນ, ຂະຫຍາຍຕົວ, ເຕີບໂຕ ແລະ ກາຍເປັນຫົວໜ່ວຍທຸລະກິດທີ່ເຂັ້ມແຂງທີ່ສາມາດແຂ່ງຂັນກັບສາກົນ ແລະ ສ້າງລາຍຮັບປະກອບເຂົ້າງົບປະມານລາຍຮັບຂອງຊາດ.

**ມາດຕາ 17 ການຫັນເປັນດີຈິຕອນດ້ານການຄ້າ**

ການຫັນປ່ຽນດິຈິຕອນດ້ານການຄ້າ ໝາຍເຖິງການນໍາໃຊ້ເຕັກໂນໂລຊີດິຈິຕອນ ເພື່ອຫັນປ່ຽນ ຂະບວນການທາງດ້ານການຄ້າ ເພື່ອ:

1. ປັບປຸງປະສິດທິພາບ: ໂດຍການເຮັດໃຫ້ວຽກງານເຮັດວຽກເປັນແບບອັດຕະໂນມັດ, ຫຼຸດຜ່ອນວຽກເອກະສານ, ປັບປຸງລະບົບການສື່ສານ,...;
2. ປັບປຸງຜົນການຜະລິດ: ໂດຍການໃຫ້ທຸລະກິດເຂົ້າເຖິງຂໍ້ມູນ ແລະ ຄວາມສາມາດເຂົ້າໃຈໃນເວລາປະຕິບັດຈິງ ໂດຍການປະສານຮ່ວມມືກັນຢ່າງມີປະສິດທິພາບກັບຂັ້ນຕອນຂອງການຜະລິດສິນຄ້າຕອບສະໜອງກັບຄວາມຕ້ອງການຕົວຈິງຂອງສັງຄົມ;
3. ປັບປຸງສ້າງໂອກາດໃໝ່ໃຫ້ກັບທຸລະກິດ: ໂດຍການຂະຫຍາຍຕະຫຼາດໃໝ່ ແລະ ໃຫ້ສາມາດເຂົ້າຫາລູກຄ້າໃໝ່ໄດ້;
4. ປັບປຸງຊ່ວຍເພີ່ມປະສົບການຂອງລູກຄ້າ: ໂດຍການສະໜອງການບໍລິການແກ່ລູກຄ້າດ້ວຍຮູບແບບສ່ວນບຸກຄົນ ແລະ ອໍານວຍຄວາມສະດວກສະບາຍແກ່ລູກຄ້າ;
5. ປັບປຸງການຕັດສິນໃຈໄດ້ດີຂຶ້ນ: ໂດຍການສະໜອງຂໍ້ມູນ ແລະ ຄວາມເຂົ້າໃຈໃນເວລາປະຕິບັດຈິງ.

ການຫັນເປັນດີຈິຕອນດ້ານການຄ້າ ບຸກຄົນນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງໄດ້ເອົາໃຈໃສ່ທາງດ້ານຄວາມປອດໄພທາງໄຊເບີ, ມາດຕະຖານ, ການເລືອກນໍາໃຊ້ເຕັກໂນໂລຊີທີ່ເໝາະສົມກັບສະພາບຕົວຈິງຂອງອົງກອນ, ການເຂົ້າເຖິງບໍລິການຂອງຜູ້ໃຊ້ບໍລິການ ຢ່າງມີຄຸນນະພາບ, ການປະຕິບັດໃຫ້ສອດຄ່ອງ ແລະ ຖືກຕ້ອງກັບກົດໝາຍທີ່ກ່ຽວຂ້ອງ ເປັນຕົ້ນ, ກົດໝາຍດ້ານການປົກປ້ອງຂໍ້ມູນ, ຄວາມປອດໄພທາງໄຊເບີ ແລະ ອື່ນໆ.

ລັດເຫັນຄວາມສໍາຄັນ ແລະ ຊຸກຍູ້ ສົ່ງເສີມ ການຫັນປ່ຽນເສດຖະກິດດິຈິຕອນໂດຍການນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝເປັນຕົ້ນ: ການສ້າງ ຫຼື ນໍາໃຊ້ ລະບົບພລາດຟອມອອນລາຍ, ລະບົບ IoT, ລະບົບ Big Data, ປັນຍາປະດິດ (AI), ລະບົບ blockchain, ລະບົບຄລາວຄອມພິວຕິ້ງ ແລະ ອື່ນໆ ເຂົ້າໃນການຫັນປ່ຽນເປັນດີຈິຕອນດ້ານການຄ້າ.

**ມາດຕາ 18 ການຫັນເປັນດີຈິຕອນດ້ານການຜະລິດ**

ການຫັນເປັນດີຈິຕອນດ້ານການຜະລິດແມ່ນການນໍາໃຊ້ເຕັກໂນໂລຊີດິຈິຕອນ ເພື່ອຫັນປ່ຽນຂະບວນການດ້ານການຜະລິດ ເພື່ອປັບປຸງປະສິດທິພາບຜົນຜະລິດ, ມີຄວາມຍືດຫຍຸ່ນໃນການດໍາເນີນງານໃນການ

ຜະລິດ, ສາມາດເຮັດວຽກແບບອັດຕະໂນມັດ, ການນຳໃຊ້ຂໍ້ມູນ ແບບຕົວຈິງ (Real Time) ເຂົ້າມາປະກອບການຕັດສິນໃຈໃນການຜະລິດທີ່ມີປະສິດທິພາບສູງກ່ວາ.

ລັດສົ່ງເສີມ ຊຸກຍູ້ໃຫ້ນຳໃຊ້ຫຸ່ນຍົນ, ເຕັກໂນໂລຊີອັດຕະໂນມັດ, ອຸປະກອນລະບົບເຊັນເຊີ, ອຸປະກອນເກັບກຳຂໍ້ມູນ , ຄລາວຄອມພິວຕິ້ງ, ປັນຍາປະດິດ (AI), ອື່ນໆ ເພື່ອເພີ່ມປະສິດທິພາບໃນການຂະບວນການຜະລິດ.

**ມາດຕາ 19 ການຫັນເປັນດີຈີຕອນດ້ານການຂົນສົ່ງ**

ການຫັນເປັນດີຈີຕອນໃນການຂົນສົ່ງແມ່ນຂະບວນການຂອງການນຳໃຊ້ເຕັກໂນໂລຊີດີຈີຕອນ ເພື່ອປັບປຸງປະສິດທິພາບ, ຄວາມໂປ່ງໃສ ແລະ ຄວາມຍືນຍົງຂອງການດຳເນີນວຽກງານດ້ານການຂົນສົ່ງ.

ບັນດາໜ່ວຍງານຂົນສົ່ງ ແຈກຢາຍ ຕ້ອງໄດ້ປັບປຸງຫັນລະບົບໃຫ້ເປັນການບໍລິການແບບດີຈີຕອນ ເປັນຕົ້ນ ການປັບປຸງທີ່ຢູ່ທາງໄປສະນີ, ການຕິດຕາມການຂົນສົ່ງແຈກຢາຍຜ່ານລະບົບອອນລາຍ, ນຳໃຊ້ເຕັກໂນໂລຊີເຂົ້າມາຊ່ວຍເຮັດໃຫ້ວຽກງານໄປສະນີ, ຂົນສົ່ງ ມີຄວາມທັນສະໄໝ, ມີຄຸນນະພາບ ແລະ ປະສິດຕິພາບ.

**ມາດຕາ 20 ການຫັນເປັນດີຈີຕອນດ້ານບໍລິການ**

ການຫັນປ່ຽນການບໍລິການໄປສູ່ການບໍລິການດີຈີຕອນໝາຍເຖິງ ການນຳໃຊ້ເຕັກໂນໂລຊີດີຈີຕອນເຂົ້າໃນຂະບວນໃຫ້ບໍລິການ

ລັດຊຸກຍູ້ສົ່ງເສີມໃຫ້ທຸກພາກສ່ວນຫັນເປັນດີຈີຕອນ ໂດຍສຸມໃສ່ ການຫັນບັນດາການບໍລິການທີ່ສຳຄັນ ແລະ ເພື່ອໃຫ້ ປະຊາຊົນທຸກຄົນສາມາດເຂົ້າເຖິງບໍລິການໄດ້ຢ່າງເທົ່າທຽມ ເປັນຕົ້ນ ບໍລິການພື້ນຖານກ່ຽວກັບການດຳລົງຊີວິດປະຈຳວັນ, ການປິ່ນປົວຮັກສາສຸຂະພາບ, ຄວາມປອດໄພ, ຂໍ້ມູນຂ່າວສານ, ...

**ມາດຕາ 21 ການຫັນເປັນດີຈີຕອນດ້ານການເງິນ**

ການຫັນເປັນດີຈີຕ໋ອນທາງດ້ານການເງິນ ຫມາຍເຖິງການລວມເອົາເຕັກໂນໂລຊີດີຈີຕ໋ອນເຂົ້າໄປໃນຂະບວນການ ແລະ ການບໍລິການທາງດ້ານການເງິນຕ່າງໆ, ກວມເອົາຂົງເຂດເຊັ່ນ: ການທະນາຄານ, ການຊໍາລະ , ການລົງທຶນ, ການປະກັນໄພ ແລະ ການປະຕິບັດຕາມກົດລະບຽບ. ການເຊື່ອມໂຍງນີ້ກ່ຽວຂ້ອງກັບການນໍາໃຊ້ເຄື່ອງມືດີຈີຕ໋ອນເຊັ່ນ: ແອັບມືຖື, ເວທີອອນລາຍ, ປັນຍາປະດິດ, ເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ, ແລະ ການວິເຄາະຂໍ້ມູນເພື່ອເພີ່ມປະສິດທິພາບ ແລະ ອັດຕະໂນມັດກິດຈະກໍາທາງດ້ານການເງິນ, ດັ່ງນັ້ນການຫຼຸດຜ່ອນການແຊກແຊງດ້ວຍຕົນເອງ ແລະ ຫຼຸດຜ່ອນຄວາມຜິດພາດ.

## ໝວດທີ 4
## ການຫັນເປັນສັງຄົມດີຈີຕອນ

**ມາດຕາ 22 ການພັດທະນາຊັບພະຍາກອນມະນຸດ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ນິຕິບຸກຄົນ ຕ້ອງມີນະໂຍບາຍ, ແຜນພັດທະນາ ແລະ ຍົກລະດັບຄວາມຮູ້ ຄວາມສາມາດ ດ້ານທັກສະດີຈີຕອນ ທີ່ກ່ຽວຂ້ອງກັບການຫັນເປັນດີຈີຕອນໃຫ້ແກ່ລັດຖະກອນ, ພະນັກງານພາຍໃນອົງກອນ ໂດຍກຳນົດເປັນແຜນໄລຍະສັ້ນ ແລະ ໄລຍະຍາວ.

ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການປະສານສົມທົບກັບ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງ ແລະ ອົງການ ທີ່ກ່ຽວຂ້ອງ ສ້າງບຸກຄະລາກອນທາງດ້ານດີຈີຕອນ ໃຫ້ພຽງພໍກັບຄວາມຕ້ອງການຂອງຕະຫຼາດແຮງງານພາຍໃນປະເທດ ແລະ ເປັນທີ່ຍອມຮັບໃນລະດັບພາກພື້ນ ແລະ ສາກົນ.

ເພື່ອຮັບປະກັນໃຫ້ແກ່ວຽກງານການພັດທະນາຊັບພະຍາກອນດ້ານມະນຸດຕ້ອງຮອງຮັບການຫັນເປັນດີຈີຕອນຂອງສາມເສົາຄ້ຳທຸກພາກສ່ວນຕ້ອງໄດ້ເອົາໃຈໃສ່ພັດທະນາ ແລະ ປະຕິບັດດັ່ງຕໍ່ໄປນີ້:

1. ການມີສ່ວນຮ່ວມຂອງປະຊາຊົນ;
2. ຫຼຸດຜ່ອນຊ່ອງຫວ່າງການເຂົ້າເຖິງການນຳໃຊ້ໃນຂອບເຂດທົ່ວປະເທດ;
3. ພັດທະນາສ້າງຫຼັກສູດໄລຍະສັ້ນ ແລະ ໄລຍະຍາວ ເພື່ອຝຶກອົບຮົມຊ່ວຍພັດທະນາດ້ານທັກສະທາງດ້ານດິຈິຕອນ, ຄວາມປອດໄພທາງດິຈິຕອນ ທີ່ເປັນພື້ນຖານ ແລະ ຈຳເປັນ ໃຫ້ແກ່ປະຊາຊົນຢ່າງທົ່ວເຖິງ;
4. ສ້າງຄວາມພ້ອມໃຫ້ທຸກຄົນໃນສັງຄົມສາມາດປັບຕົວ, ປະກອບອາຊີບ ແລະ ດຳລົງຊີວິດໃນສັງຄົມດິຈິຕອນໄດ້ປົກກະຕິ (ລົບລ້າງກົກຄອມພິວເຕີ).

**ມາດຕາ 23 ການຫັນເປັນດິຈິຕອນດ້ານສາທາລະນະສຸກ**

ການຫັນເປັນດິຈິຕອນດ້ານສາທາລະນະສຸກ ແມ່ນການນຳໃຊ້ເຕັກໂນໂລຊີມາພັດທະນາປັບປຸງລະບົບສາທາລະນະສຸກ ເປັນຕົ້ນລະບົບພລາດຟອມປຶກສາຫາລື, ກວດກາ ແລະ ຮັກສາສຸຂະພາບ ແບບອອນລາຍ ເຮັດໃຫ້ປະຊາຊົນ ສາມາດເຂົ້າເຖິງການປິ່ນປົວ, ຮັກສາສຸຂະພາບ ແລະ ຮັບຮູ້ຂໍ້ມູນຂ່າວສານດ້ານສາທາລະນະສຸກທີ່ຈຳເປັນທັນສະພາບ, ຊ່ວຍຍົກລະດັບຄຸນະພາບທາງດ້ານສາທາລະນະສຸກ ທັງປະຢັດເວລາ, ງົບປະມານ, ເພີ່ມປະສິດທິຜົນທາງດ້ານການແພດ ແລະ ການຮັກສາ ພ້ອມທັງມີການເຊື່ອມໂຍງຂໍ້ມູນທາງການແພດຮ່ວມກັນ ທັງພາຍໃນ ແລະ ສາກົນ.

ກະຊວງສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຫັນເປັນດິຈິຕອນທາງດ້ານສາທາລະນະສຸກໃນທົ່ວປະເທດ.

**ມາດຕາ 24 ການຫັນເປັນດິຈິຕອນດ້ານການສຶກສາ**

ການຫັນເປັນດິຈິຕອນດ້ານການສຶກສາ ແມ່ນການປະສົມປະສານເຕັກໂນໂລຊີດິຈິຕອນ ເຂົ້າໃນຂະບວນການສຶກສານ ເພື່ອຍົກລະດັບ ແລະ ຮັບປະກັນ ຄຸນະພາບ ການຮຽນການສອນ ແລະ ການຄຸ້ມຄອງ-ພັດທະນາ ລະບົບການສຶກສາທົ່ວປະເທດ ເຮັດໃຫ້ລະບົບການສຶກສາພາຍໃນ ສປປ ລາວ ມີການເຊື່ອມໂຍງ ແລະ ນຳໃຊ້ຂໍ້ມູນຂ່າວສານຮ່ວມກັນ.

ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການປະສານສົມທົບກັບ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຫັນເປັນດິຈິຕອນທາງດ້ານການສຶກສາໃນທົ່ວປະເທດ.

ຄວາມສຳຄັນຂອງການສຶກສາ ແລະ ການຝຶກອົບຮົມ: ແມ່ນແນໃສ່ການສ້າງຫຼັກສູດທີ່ສອດຄ່ອງກັບຄວາມຕ້ອງການຕົວຈິງ, ເຮັດໃຫ້ປະຊາຊົນເຂົ້າເຖິງຫຼັກສູດ ເພື່ອຮຽນຮູ້ພັດທະນາດ້ານທັກສະດິຈິຕອນເປັນສິ່ງຈຳເປັນສຳລັບການຢູ່ລອດ, ການມີສ່ວນຮ່ວມໃນການພັດທະນາເສດຖະກິດ ແລະ ສັງຄົມ ແບບດິຈິຕອນ.

ລັດຖະບານ ແລະ ພາກທຸລະກິດຕ້ອງໃຫ້ຄວາມສຳຄັນ ແລະ ລົງທຶນໃສ່ວຽກງານການສຶກສາ ແລະ ການຝຶກອົບຮົມ ເພື່ອຮັບປະກັນວ່າປະຊາຊົນທຸກຄົນມີທັກສະທີ່ຈຳເປັນສາມາດນຳໃຊ້ເຄື່ອງມື ແລະ ເຂົ້າເຖິງບໍລິການແບບອອນລາຍ, ແຮງງານມີທັກສະສາມາດປະກອບອາຊີບໃນຍຸກຂອງເສດຖະກິດດິຈິຕອນ, ມີນັກປະດິດສ້າງ, ນັກຄົ້ນຄ້ວາ, ນັກວິທະຍາສາດ ແລະ ຊ່ຽວຊານ ທີ່ສາມາດພັດທະນາຜົນງານ ແລະ ຜະລິດຕະພັນທີ່ສ້າງມູນຄ່າ ແລະ ຄຸນຄ່າສູງຕອບສະໜອງໃຫ້ແກ່ສັງຄົມ ໃນຍຸກດິຈິຕອນ.

**ມາດຕາ 25 ຄວາມປອດໄພຂອງສັງຄົມ**

ຄວາມປອດໄພຂອງສັງຄົມດິຈິຕອນຫມາຍເຖິງການປົກປ້ອງປະຊາຊົນ, ອົງການຈັດຕັ້ງ ແລະ ໂຄງສ້າງພື້ນຖານທີ່ສຳຄັນຈາກໄພຄຸກຄາມ ແລະ ຂົ່ມຂູ່ ດິຈິຕອນ. ໄພຂົ່ມຂູ່ເຫຼົ່ານີ້ສາມາດລວມເຖິງການໂຈມຕີທາງອິນເຕີເນັດ, ການລະເມີດຂໍ້ມູນ ແລະ ການລະເມີດຄວາມເປັນສ່ວນຕົວ.

ການນຳໃຊ້ເຕັກໂນໂລຊີດິຈິຕອນນັບມື້ນັບເພີ່ມຂຶ້ນໄດ້ສ້າງໂອກາດໃຫມ່ສຳລັບອາຊະຍາກຳ. ຕົວຢ່າງ, ອາດຊະຍາກອນສາມາດໃຊ້ອິນເຕີເນັດ ເພື່ອ ກະທຳການສໍ້ໂກງ, ອາດຊະຍາກຳທາງອິນເຕີເນັດ ແລະ ການກໍ່ການຮ້າຍ.

ຄວາມປອດໄພທາງສັງຄົມຕ້ອງໄດ້ຮັບການປັບປຸງຍົກລະດັບ ໂດຍການນຳໃຊ້ເຕັກໂນໂລຊີດິຈິຕອນ ເພື່ອ ປົກປ້ອງຄວາມປອດໄພສາທາລະນະ ເປັນຕົ້ນ: ການນຳໃຊ້ເຕັກໂນໂລຊີ ເພື່ອປ້ອງກັນອາຊະຍາກຳ, ການສືບສວນອາຊະຍາກຳ, ການຈັບກຸມອາດສະຍາກອນ, ການປ້ອງກັນລະບົບໂຄງລ່າງພື້ນຖານທີ່ສຳຄັນຂອງຊາດ, ປົກປ້ອງສິດຜົນປະໂຫຍດວັດທະນາທຳຮີດຄອງປະເພນີ ແລະ ໄພຄຸກຄາມອື່ນໆ.

**ມາດຕາ 26 ວັດທະນະທຳດິຈິຕອນ**

ວັດທະນະທຳດິຈິຕອນແມ່ນວັດທະນະທຳທີ່ເກີດຂຶ້ນຈາກການນຳໃຊ້ເຕັກໂນໂລຊີດິຈິຕອນຢ່າງກວ້າງຂວາງ, ລວມທັງອິນເຕີເນັດ, ສື່ສັງຄົມ ແລະ ອຸປະກອນມືຖື ເພື່ອຕິດຕໍ່ສື່ສານ, ແບ່ງປັນຂໍ້ມູນ, ຜະລິດ ແລະ ບໍລິໂພກ. ວັດທະນະທຳດິຈິຕອນມີລັກສະນະຈຳນວນຫນຶ່ງເປັນຕົ້ນ: ມີລັກສະນະເຊື່ອມຕໍ່ຈາກທຸກບ່ອນໃນໂລກ ແລະ ແບ່ງປັນຂໍ້ມູນແລະຄວາມຄິດໄດ້ທັນທີ, ອຳນວຍຄວາມສະດວກໃນການຮ່ວມມື ສາມາດເຮັດວຽກຮ່ວມກັນຈາກສະຖານທີ່ແຕກຕ່າງກັນ, ສາມາດປະກອບຄຳເຫັນ ແລະ ແບ່ງປັນແນວຄວາມຄິດ ໃນເວລາປະຕິບັດຈິງ. ສາມາດນຳໃຊ້ເຕັກໂນໂລຊີດິຈິຕອນ ເພື່ອສ້າງຮູບແບບໃຫມ່ຂອງສິລະປະ, ດົນຕີ, ວັນນະຄະດີ, ... ສາມາດສ້າງ ແລະ ແບ່ງປັນເນື້ອຫາ ພົວພັນກັບດ້ານການເຮັດທຸລະກິດ. ສາມາດຊື້ເຄື່ອງອອນລາຍແທນການຊື້ເຄື່ອງແບບດັ້ງເດີມ. ເຮັດໃຫ້ຂໍ້ມູນມີຄວາມໂປ່ງໃສຫຼາຍຂຶ້ນ.

**ມາດຕາ 27 ຫຼຸດຊ່ອງວ່າງ ແລະ ຄວາມເລື່ອມລໍ້າຂອງສັງຄົມ**

ມີນະໂຍບາຍ ແລະ ມາດຕະການທີ່ຈຳເປັນເຮັດໃຫ້ ປະຊາຊົນສາມາດນຳໃຊ້ອຸປະກອນທີ່ຈຳເປັນ ລາຄາຖືກ ເປັນຕົ້ນ: ຄອມພິວເຕີ, ໂທລະສັບສະມາດໂຟນ, ສາມາດເຊື່ອມຕໍ່ອິນເຕີເນັດຄວາມໄວສູງ, ເຂົ້າເຖິງບໍລິການ ແລະ ຂໍ້ມູນຂ່າວສານ ເພື່ອຫຼຸດຜ່ອນຊ່ອງວ່າງລະຫວ່າງຊົນນະບົດ ແລະ ຕົວເມືອງເປັນຕົ້ນ ການສຶກສາ, ສາທາລະນະສຸກ ແລະ ອື່ນໆ.

## ພາກທີ III
## ສະພາບແວດລ້ອມການຫັນເປັນດິຈິຕອນ

### ໝວດທີ 1
### ໂຄງລ່າງພື້ນຖານຂອງການຫັນເປັນດິຈິຕອນ

**ມາດຕາ 28 ລະບົບເຄືອຂ່າຍໂທລະຄົມມະນາຄົມ**

ລະບົບເຄືອຂ່າຍໂທລະຄົມມະນາຄົມແມ່ນ "ອົງໃສ່ກົດໝາຍ"

ຂະຫຍາຍຕາຂ່າຍພື້ນຖານໂທລະຄົມມະນາຄົມ ໃຫ້ຄອບຄຸມເນື້ອທີ່ທົ່ວປະເທດ, ໂດຍການພັດທະນາໃຫ້ຈັດສັນມີຈຸດສຸມ ແນໃສ່ເຂດຊຸມຊົນອາໄສ, ເຂດເສດຖະກິດ ແລະ ອຸດສະຫະກຳ, ເຂດທຳການຜະລິດກະສິກຳ, ເຂດບໍລິການສາທາລະນະ, ເຂດແຫຼ່ງທ່ອງທ່ຽວ, ... ໂດຍໃຫ້ສຸມໃສ່ຂະຫຍາຍລະບົບຕາຂ່າຍການສື່ສານ

ແບບທັນສະໄໝ ເຊັ່ນ: ລະບົບອິນເຕີເນັດຄວາມໄວສູງ, ລະບົບ 5G ແລະ ອື່ນໆ ເພື່ອເຮັດໃຫ້ທຸກຄົນສາມາດເຂົ້າເຖິງບໍລິການໄດ້ຢ່າງທົ່ວເຖິງ, ເທົ່າທຽມ, ມີຄຸນນະພາບ ແລະ ລາຄາເໝາະສົມ.

ລັດຊຸກຍູ້ສົ່ງເສີມການລົງທຶນເພື່ອພັດທະນາພື້ນຖານໂຄງລ່າງໂທລະຄົມມະນາຄົມ ແລະ ການສື່ສານ ໂດຍສຸມໃສ່ຮັບໃຊ້ບັນດາວຽກງານ ດັ່ງຕໍ່ໄປນີ້:

1. ລະບົບເຄືອຂ່າຍໂທລະຄົມທີ່ມີຄວາມໄວສູງ, ມີຄຸນນະພາບ ແລະ ລາຄາທີ່ເໝາະສົມ;
2. ຂົງເຂດຮັບໃຊ້ວຽກງານພາກບໍລິຫານລັດ, ການບໍລິການສາທາລະນະສຸກ, ການສຶກສາ,...
3. ເຂດຊຸມຊົນທີ່ຢູ່ອາໃສ, ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ, ເຂດເສດຖະກິດ ແລະ ອຸສະຫະກຳ, ເຂດທຳການຜະລິດກະສິກຳ, ເຂດບໍລິການສາທາລະນະ, ເຂດແຫຼ່ງທ່ອງທ່ຽວ...
4. ການຕອບໂຕ້ສຸກເສີນ ແລະ ການຄຸ້ມຄອງໄພພິບັດ: ລະບົບເຄືອຂ່າຍໂທລະຄົມມະນາຄົມທີ່ເຂັ້ມແຂງແມ່ນມີຄວາມສຳຄັນຕໍ່ການສື່ສານທີ່ມີປະສິດທິພາບໃນຍາມສຸກເສີນ ແລະ ໄພພິບັດທຳມະຊາດ ທີ່ຊ່ວຍໃນການປະສານງານການຕອບໂຕ້ທີ່ທັນເວລາ ແລະ ການເຜີຍແຜ່ຂໍ້ມູນຈຳເປັນທີ່ສຳຄັນ;
5. ຄວາມປອດໄພ ແລະ ການເຊື່ອມໂຍງເຊື່ອມຕໍ່ກັບສາກົນ.
6. ອື່ນໆ

### ມາດຕາ 29 ສູນຂໍ້ມູນດີຈີຕອນ

ສູນຂໍ້ມູນດີຈີຕອນ ແມ່ນລະບົບລວມສູນໂຄງລ່າງພື້ນຖານສູນຂໍ້ມູນລະບົບເຕັກນິກ ແລະ ອຸປະກອນເຕັກໂນໂລຊີຂໍ້ມູນຂ່າວສານ ເຊັ່ນ ລະບົບຄລາວຄອມພິວຕິ້ງ, ລະບົບເຄື່ອງແມ່ຂ່າຍ, ອຸປະກອນລະບົບເຄືອຂ່າຍ, ລະບົບພື້ນທີ່ຈັດເກັບຂໍ້ມູນ, ລະບົບປ້ອງກັນຄວາມປອດໄພດ້ານເຄືອຂ່າຍ ແລະ ຂໍ້ມູນຂ່າວສານ, ລະບົບສາຍສົ່ງເສີມຕໍ່ຄວາມໄວສູງ, ລະບົບໄຟຟ້າທີໄດ້ມາດຕະຖານ, ລະບົບເຄື່ອງທຳຄວາມເຢັນ , ລະບົບປ້ອງກັນຄວາມປອດໄພອາຄານ ເປັນຕົ້ນ. ເພື່ອສະໜອງ, ສະໜອງລະບົບຄລາວສຳລັບການປະມວນຜົນ, ການຕິດຕັ້ງລະບົບແອັບພິເຄຊັນ, ການເກັບຮັກສາຂໍ້ມູນ, ການຕິດຕັ້ງລະບົບເວບໄຊ, ລະບົບເຄື່ອງແມ່ຂ່າຍຈຳລອງ, ລວມໄປເຖິງການໃຫ້ບໍລິການເຊົ່າພື້ນທີ່ຕິດຕັ້ງອຸປະກອນ ແລະ ບໍລິການອື່ນໆ.

ລັດສົ່ງເສີມ ແລະ ຊຸກຍູ້ໃຫ້ໜ່ວຍງານຂອງລັດ ແລະ ພາກສ່ວນເອກະຊົນ ບັນດາຫົວໜ່ວຍທຸກິດຕ່າງໆ ພັດທະນາໂຄງລ່າງພື້ນຖານ ແລະ ເຕັກໂນໂລຊີດ້ານສູນຂໍ້ມູນ ທີ່ທັນສະໄໝ, ມີຄວາມປອດໄພ ແລະ ໄດ້ມາດຕະຖານສາກົນ ຢູ່ພາຍໃນ ສປປ ລາວ ເພື່ອຮອງຮັບກັບຄວາມຕ້ອງການໃນການຂະຫຍາຍຕົວ ຂອງສັງຄົມ.

### ມາດຕາ 30 ລະບົບຄລາວຄອມພິວຕິ້ງ

ລະບົບ ຄລາວຄອມພິວຕິ້ງ (Cloud computing) ແມ່ນລະບົບທີ່ໃຫ້ບໍລິການດ້ວຍວິທີການເຂົ້າເຖິງການນຳໃຊ້ຊັບພະຍາກອນເຕັກໂນໂລຊີການສື່ສານ ເປັນຕົ້ນ ການປະມວນຜົນ, ໜ່ວຍຄວາຈຳ, ເຊີເວີ, ພື້ນທີ່ຈັດເກັບຂໍ້ມູນ, ລະບົບຖານຂໍ້ມູນ, ລະບົບເຄືອຂ່າຍ, ຊອບແວ, ການວິເຄາະ ແລະ ຂໍ້ມູນອັດສະລິຍະ ຜ່ານທາງອິນເຕີເນັດ. ໂດຍສົ່ງຜົນເຮັດໃຫ້ການໃຊ້ງານຊັບພະຍາກອນເຄື່ອງແມ່ຂ່າຍໄດ້ຢ່າງມີປະສິດທິພາບສູງສຸດ.

ລັດສົ່ງເສີມ ແລະ ຊຸກຍູ້ໃຫ້ລົງທຶນ ແລະ ພັດທະນາລະບົບຄລາວຄອມພິວຕິ້ງ ທີ່ສ້າງຜົນປະໂຫຍດເພື່ອຮັບໃຊ້ບັນດາວຽກງານລວມມີ:

1. ປະຫຍັດຕົ້ນທຶນ ຊ່ວຍໃຫ້ທຸລະກິດປະຫຍັດເງິນໃນການຈັດຊື້ອຸປະກອນ ຮາດແວ, ຊອບແວ, ບຸກຄະລາກອນໄອທີ ແລະ ອື່ນໆ;

2. ມີຄວາມຍືດຫຍຸ່ນ (Flexible), ສະດວກໃນການຂະຫຍາຍ ຫຼື ຫຼຸດຂະໜາດໄດ້ສະດວກ ເຮັດໃຫ້ເໝາະກັບທຸລະກິດສາມາດເຂົ້າເຖິງຊັບພະຍາກອນ ແລະ ສອດຄ່ອງກັບສະພາບການບໍລິຫານຈັດການດ້ານງົບປະມານ ແລະ ການຂະຫຍາຍທຸລະກິດ;
3. ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ຮອງຮັບກັບມາດຕະຖານແຫ່ງຊາດ ແລະ ສາກົນ, ເປັນມິດກັບສິ່ງແວດລ້ອມ;
4. ມີຄວາມປອດໄພໃນລະດັບສູງ ແລະ ສາມາດປ້ອງກັນຄວາມປອດໄພທາງດ້ານຂໍ້ມູນຂອງຜູ້ໃຊ້ບໍລິການ;
5. ອື່ນໆ

**ມາດຕາ 31 ລະບົບພລາດຟອມ**

ລະບົບພລາດຟອມດິຈິຕອນ ແມ່ນພື້ນຖານໂຄງລ່າງອອນລາຍທີ່ພັດທະນາຂຶ້ນມາຈາກລະບົບຊອບແວ ເພື່ອອຳນວຍຄວາມສະດວກໃນການສື່ສານ ແລກປ່ຽນຂໍ້ມູນ, ການເຮັດທຸລະກຳ, ລະບົບພລາດຟອມສາມາດນຳໃຊ້ເພື່ອເຊື່ອມຕໍ່ທຸລະກິດ ກັບ ລູກຄ້າ, ຜູ້ບໍລິໂພກ, ຜູ້ສະໜອງ ແລະ ຄູ່ຮ່ວມງານ ຫຼື ເພື່ອ ສະໜອງພື້ນທີ່ (ເວທີ) ສຳລັບຜູ້ໃຊ້ເພື່ອຮ່ວມມື ແລະ ແບ່ງປັນຂໍ້ມູນ. ລັດສົ່ງເສີມໃຫ້ ບັນດາພາກສ່ວນ ສຸມໃສ່ ພັດທະນາບັນດາລະບົບພລາດຟອມ ທີ່ສຳຄັນເພື່ອນຳໃຊ້ເຂົ້າໃນຈຸດປະສົງຕ່າງໆ ເພື່ອຮັບປະກັນການຫັນປ່ຽນໄປສູ່ແບບຜ່ານທາງອອນລາຍ ເປັນຕົ້ນ ການຄ້າເອເລັກໂຕຣນິກ, ການຄຸ້ມຄອງບໍລິຫານ, ສື່ສັງຄົມອອນລາຍ, ການຮຽນຮູ້, ຄວາມບັນເທີງ ແລະ ອື່ນໆ.

**ມາດຕາ 32 ລະບົບເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ**

ລະບົບກຸ່ມຂໍ້ມູນຜູກພັນ (blockchain) ເປັນເທກໂນໂລຊີລະບົບໂຄງຂ່າຍການຈັດເກັບ, ບັນທຶກຂໍ້ມູນ ແບບແຈກຢາຍ ທີ່ມີເຮັດໃຫ້ການເຮັດທຸລະກຳມີຄວາມປອດໄພ ແລະ ໂປ່ງໃສ.

ລະບົບກຸ່ມຂໍ້ມູນຜູກພັນ ສາມາດນຳໃຊ້ ເຂົ້າໃນວຽກງານ ຊ່ວຍພັດທະນາເສດຖະກິດ ແລະ ສັງຄົມໃນຫຼາຍດ້ານ ເປັນຕົ້ນ:

1. ການບໍລິການທາງດ້ານການເງິນ;
2. ການຄຸ້ມຄອງລະບົບຕ່ອງໂສ້ການສະໜອງ (Supply Chain);
3. ການດູແລສຸຂະພາບ;
4. ການບໍລິຫານຈັດການຂອງລັດຖະບານ;
5. ພະລັງງານ;
6. ການຂົນສົ່ງ ແລະ ແຈກຢາຍ;
7. ຊັບສິນທາງປັນຍາ;
8. ສິນລະປະ ແລະ ຜະລິດຕະພັນສິນຄ້າ;
9. ອື່ນໆ.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ບຸລິມະສິດນຳໃຊ້ລະບົບເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ ໃນການຫັນເປັນດິຈິຕອນຂອງອົງການຈັດຕັ້ງຕົນ ແລະ ສາມາດເລືອກນຳໃຊ້ການບໍລິການໂຄງລ່າງພື້ນຖານຂອງພາກເອກະຊົນ ໂດຍສອດຄ່ອງ ກັບມາດຕະຖານເຕັກນິກ.

ໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄ້ວາ ເພື່ອພັດທະນາ ລະບົບກຸ່ມຂໍ້ມູນຜູກພັນ ເພື່ອເປັນລະບົບນຳໃຊ້ໃນອົງການຈັດຕັ້ງລັດ ແລະ ວຽກງານສຳຄັນຂອງຊາດ.

**ມາດຕາ 33 ລະບົບການຢັ້ງຢືນຕົວຕົນທາງດິຈິຕອນ**

ລະບົບການຢັ້ງຢືນຕົວຕົນທາງດິຈິຕອນ ແມ່ນ ການນຳໃຊ້ຊຸດຂໍ້ມູນ ທີ່ໄດ້ບັນທຶກຢູ່ໃນລະບົບດິຈິຕອນ ລະບຸຕົວຕົນ ແລະ ຄຸນລັກສະນະທີ່ເປັນເອກະລັກ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອຢັ້ງຢືນຕົວຕົນ ຂອງຜູ້ໃຊ້ບໍລິການໃນເວລາເຂົ້າໃຊ້ບໍລິການ.

ການຢັ້ງຢືນຕົວຕົນທາງດິຈິຕອນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 34 ເຂດເສດຖະກິດດິຈິຕອນ**

ເຂດເສດຖະກິດດິຈິຕອນ ແມ່ນເຂດພື້ນທີ່ ທີ່ຖືກກຳນົດຂຶ້ນມາ ເພື່ອສົ່ງເສີມການພັດທະນາເສດຖະກິດດິຈິຕອນ. ໂດຍປົກກະຕິ ແລ້ວຈະສ້າງສະພາບແວດລ້ອມ, ສ້າງນະໂຍບາຍສະເໜີສິ່ງຈູງໃຈຫຼາຍໆ ຢ່າງໃຫ້ກັບຫົວໜ່ວຍທຸລະກິດ ເປັນຕົ້ນ: ການຫຼຸດຜ່ອນ ພາສີ, ຄ່າເຊົ່າ ແລະ ການເຂົ້າເຖິງອິນເຕີເນັດຄວາມໄວສູງ, ນອກນັ້ນຍັງສະໜອງການບໍລິການສະໜັບສະໜູນທີ່ຫຼາກຫຼາຍ ເປັນຕົ້ນ: ໂຄງການ ການບົ່ມເພາະ (incubation) ທຸລະກິດ ແລະ ຫຼັກສູດການຝຶກອົບຮົມ.

ສວນເຕັກໂນໂລຢີດິຈິຕອນ ແມ່ນເຂດພື້ນທີ່ເສດຖະກິດດິຈິຕອນ ແຕ່ ມີຄວາມເປັນສະເພາະ ໂດຍຈະເນັ້ນສຸມໃສ່ການພັດທະນາອຸດສາຫະກຳເຕັກໂນໂລຊີ ການສື່ສານ ຂໍ້ມູນຂ່າວສານ. ໂດຍປົກກະຕິແລ້ວເຂດສວນເຕັກໂນໂລຊດິຈິຕອນ ຈະໃຫ້ບໍລິການສະໜັບສະໜູນທີ່ກວ້າງຂວາງກວ່າ ເຂດເສດຖະກິດດິຈິຕອນ ເຊັ່ນ: ສະຖານທີ່ຄົ້ນຄວ້າ ແລະ ການພັດທະນາ, ຫ້ອງທົດລອງ ແລະ ບັນດາໂຄງການທີ່ຊ່ວຍເລັ່ງຊຸກຍູ້ການພັດທະນາ.

ການພັດທະນາເຂດເສດຖະກິດດິຈິຕອນ ຫຼື ສວນສາທາລະນະເຕັກໂນໂລຊີດິຈິຕອນໃຫ້ສູມໃສ່ບັນດາວຽກທີ່ສ້າງຜົນປະໂຫຍດແກ່ເສດຖະກິດ ແລະ ສັງຄົມ ດັ່ງຕໍ່ໄປນີ້:

1. ດຶງດູດການລົງທຶນ ແລະ ດຳເນີນທຸລະກິດ: ສາມາດດຶງດູດການລົງທຶນ ແລະ ການດຳເນີນທຸລະກິດຈາກລະດັບທ້ອງຖິ່ນ, ລະດັບຊາດ, ແລະ ສາກົນ. ສິ່ງດັ່ງກ່າວສາມາດຊ່ວຍສ້າງວຽກເຮັດງານທຳ ແລະ ຊຸກຍູ້ການເຕີບໂຕດ້ານເສດຖະກິດ.
2. ສ້າງນະວັດຕະກຳ: ສາມາດສົ່ງເສີມນະວັດຕະກຳໂດຍການໃຫ້ທຸລະກິດເຂົ້າເຖິງຊັບພະຍາກອນ ເຊັ່ນ: ສະຖານທີ່ຄົ້ນຄ້ວາ ແລະ ການພັດທະນາ, ຫ້ອງທົດລອງ ແລະໂຄງການທີ່ຊ່ວຍເລັ່ງຊຸກຍູ້ການພັດທະນາ.
3. ພັດທະນາທັກສະ: ສາມາດຊ່ວຍພັດທະນາທັກສະ ແລະ ຄວາມຮູ້ທີ່ຈຳເປັນສຳລັບເສດຖະກິດດິຈິຕອນ ໂດຍການສະໜອງຫຼັກສູດການຝຶກອົບຮົມ ແລະ ໂອກາດດ້ານການສຶກສາອື່ນໆ.
4. ສົ່ງເສີມການເປັນຜູ້ປະກອບການ: ສາມາດສົ່ງເສີມການເປັນຜູ້ປະກອບການໂດຍການສະໜອງການບໍລິການສະໜັບສະໜູນທຸລະກິດແບບ ສະຕາດອັບ (Startup), ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ.
5. ປັບປຸງການເຊື່ອມຕໍ່: ສາມາດປັບປຸງການເຊື່ອມໂຍງ/ເຊື່ອມຕໍ່ ໂດຍການລົງທຶນໃນໂຄງສ້າງພື້ນຖານອິນເຕີເນັດຄວາມໄວສູງ.
6. ສ້າງລະບົບນິເວດເຕັກໂນໂລຊີທີ່ຫຼາກຫຼາຍ: ສາມາດສ້າງລະບົບນິເວດເຕັກໂນໂລຊີທີ່ມີຄວາມສ້າງສັນ, ຫຼາກຫຼາຍ ໂດຍການນຳເອົາທຸລະກິດ, ຜູ້ປະກອບການ, ນັກລົງທຶນ ແລະ ຜູ້ປະດິດສ້າງມາລວມໂຕນຳກັນ.

## ໝວດທີ 2
## ຊັບສິນດິຈິຕອນ

**ມາດຕາ 35 ຊັບສິນດິຈິຕອນ**

ຊັບສິນດິຈິຕອນ ແມ່ນ ຊັບສິນທີ່ຖືກສ້າງຂຶ້ນ ດ້ວຍຂໍ້ມູນເອເລັກໂຕຣນິກ ທີ່ມີມູນຄ່າ ເພື່ອຄອບຄອງ, ເປັນຕົວກາງໃນການແລກປ່ຽນ ຫຼື ຊື້ຂາຍ ດ້ວຍກັນ ເຊັ່ນ ຮູບພາບດິຈິຕອນ, ພາບເຄື່ອນໄຫວ ຫຼື ວີດີໂອ, ສຽງດິຈິຕອນ, ຂໍ້ຄວາມດິຈິຕອນ, ເອກະສານດິຈິຕອນ, ຊອບແວ ຫຼື ໂປຣແກຣມ, ເງິນຄຣິບໂຕ, ຫຼຽນໂທເຄັນດິຈິຕອນ, ໂທເຄັນດິຈິຕອນທີ່ບໍ່ສາມາດທົດແທນໄດ້ (NFT).

ການດໍາເນີນທຸລະກໍາຊັບສິນດິຈິຕອນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 36 ການຫັນຊັບສິນເປັນຊັບສິນດິຈິຕອນ**

ລັດຖະບານຊຸກຍູ້ ແລະ ສົ່ງເສີມໃຫ້ທັງພາກລັດ ແລະ ເອກະຊົນ ຄົ້ນຄ້ວາພັດທະນາ, ເຮັດທຸລະກິດກ່ຽວກັບຊັບສິນດິຈິຕອນທີ່ຖືກຕ້ອງຕາມລະບຽບກົດໝາຍ ເພື່ອ ຂຸດຄົ້ນສ້າງແຫຼ່ງລາຍຮັບໃໝ່ເຂົ້າລັດຖະບານ.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງມີ ນະໂຍບາຍ, ແຜນພັດທະນາ ການຫັນຊັບສິນຂອງລັດ ເປັນຊັບສິນດິຈິຕອນ ເພື່ອເພີ່ມປະສິດຕິພາບໃນການຄຸ້ມຄອງ ແລະ ຄວາມໂປ່ງໃສ.

## ໝວດທີ 3
## ການປ້ອງກັນຄວາມປອດໄພຂອງການຫັນເປັນດິຈິຕອນ

**ມາດຕາ 37 ການປ້ອງກັນໂຄງລ່າງພື້ນຖານດິຈິຕອນສໍາຄັນ**

ແມ່ນການປ້ອງກັນລະບົບໂຄງລ່າງພື້ນຖານທີ່ສໍາຄັນທີ່ເປັນລະບົບເຄືອຂ່າຍ ແລະ ລະບົບດິຈິຕອນເຮັດໜ້າທີ່ຮັບຮັບປະກັນ, ຮັບໃຊ້ ໃຫ້ແກ່ວຽກງານການພັດທະນາທາງດ້ານ ເສດຖະກິດ, ສັງຄົມ ແລະ ລັດຖະບານ ເປັນຕົ້ນ: ໂທລະຄົມມະນາຄົມ, ອິນເຕີເນັດ, ໄຟຟ້າ, ພະລັງງານ, ຊັບພະຍາກອນນໍ້າ, ຂົນສົ່ງ, ການເງິນ, ສາທາລະນະສຸກ, ບໍລິຫານຄຸ້ມຄອງພາກລັດ, ລະບົບທໍາການຜະລິດທີ່ສໍາຄັນ ແລະ ອື່ນໆ.

ບັນດາລະບົບໂຄງລ່າງພື້ນຖານດິຈິຕອນສໍາຄັນຕ້ອງໄດ້ຮັບການປ້ອງກັນຄວາມປອດໄພ ໂດຍມີການປົກປ້ອງການເຂົ້າເຖິງ, ການປ້ອງກັນຈາກການບຸກໂຈມຕີ ແລະ ໄພຄຸກຄາມອື່ນໆ ທາງດ້ານໄຊເບີ.

ບັນດາລະບົບໂຄງລ່າງພື້ນຖານດິຈິຕອນສໍາຄັນຕ້ອງໄດ້ຕິດຕັ້ງລະບົບອຸປະກອນປ້ອງກັນທາງດ້ານຄວາມປອດໄພໄຊເບີທີ່ຮັບປະກັນ, ໄດ້ມາດຕະຖານ, ຕ້ອງໄດ້ສ້າງ ແລະ ຍົກລະດັບທັນສະຂອງບຸກຄະລາກອນຜູ້ຮັບຜິດຊອບວຽກງານດັ່ງກ່າວໃຫ້ມີຄວາມພ້ອມ ແລະ ພຽງພໍ, ສ້າງລະບົບເຄືອຂ່າຍແຈ້ງເຕືອນເຫດສຸກເສີນ ແລະ ຮ່ວມມືກັບສາກົນ ເພື່ອແບ່ງປັນຂໍ້ມູນຂ່າວສານທາງດ້ານວຽກງານດ້ານຄວາມປອດໄພໄຊເບີ.

**ມາດຕາ 38 ການປ້ອງກັນຄວາມປອດໄພຂໍ້ມູນ**

ຄວາມປອດໄພຂອງຂໍ້ມູນດິຈິຕອນ ແມ່ນຂະບວນການຂອງການປົກປັກຮັກສາຂໍ້ມູນຈາກການເຂົ້າເຖິງ, ການນໍາໃຊ້, ການເປີດເຜີຍ, ການດັດແກ້ ຫຼື ການທໍາລາຍ ແລະ ອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດ.

ບັນດາໜ່ວຍງານ ຫຼື ອົງກອນທີ່ນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ ຕ້ອງໄດ້ມີນະໂຍບາຍ, ມາດຕະການ, ລະບຽບການ ໃນການບໍລິຫານຈັດການດ້ານຄວາມສ່ຽງ ແລະ ຄວາມປອດໄພດ້ານຂໍ້ມູນຂ່າວສານ ເອເລັກໂຕຣນິກ ຫຼື ດິຈິຕອນຂອງຕົນ.

ການປົກປ້ອງຂໍ້ມູນທາງເອເລັກໂຕຣນິກ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນທາງເອເລັກໂຕຣນິກ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ

**ມາດຕາ 39 ຄວາມໜ້າເຊື່ອຖື**

ຄວາມໜ້າເຊື່ອຖືທາງດ້ານດີຈີຕອນແມ່ນຄວາມເຊື່ອໝັ້ນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຕໍ່ກັບການນຳໃຊ້ເຕັກໂນໂລຊີດີຈີຕອນ ເປັນຕົ້ນ: ຄວາມເຊື່ອຖືກ່ຽວກັບ ດ້ານຄວາມປອດໄພການນຳໃຊ້, ຄວາມຖືກຕ້ອງ, ຄວາມເປັນສ່ວນຕົວ, ຄວາມໂປ່ງໃສ, ຄວາມຍຸດຕິທຳ, ຄວາມຮັບຜິດຊອບ,... ຕໍ່ກັບຂໍ້ມູນຂ່າວສານ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ ຫຼື ໃຫ້ບໍລິການລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ຫຼື ດີຈີຕອນ ຕ້ອງໄດ້ສ້າງນະໂຍບາຍ, ມາດຕະຖານ ISO, ຄຳແນະນຳ ແລະ ລະບຽບການ, ເຜີຍແຜ່ ແລະ ອື່ນໆ ເພື່ອຮັບປະກັນ ແລະ ເພື່ອຄວາເຊື່ອຖື ໂດຍໃຫ້ປະຕິບັດສອດຄ່ອງຕາມກົດໝາຍດ້ານຄວາມປອດໄພທາງໄຊເບີ, ກົດໝາຍປົກປ້ອງຂໍ້ມູນທາງເອເລັກໂຕຣນິກ, ກົດໝາຍປົກປ້ອງຜູ້ຊົມໃຊ້ ແລະ ອື່ນໆ.

**ມາດຕາ 40 ອົງກອນ ຫຼື ໜ່ວຍຄວາມປອດໄພທາງໄຊເບີ**

ສ້າງ ຫຼື ປັບປຸງໃຫ້ມີສູນຄວາມປອດໄພທາງໄຊເບີແຫ່ງຊາດ ຫຼື ສ້າງກົນໄກທີ່ຈຳເປັນ ເພື່ອ ຮັບຜິດຊອບ ແລະ ຮັບປະກັນທາງດ້ານ: ການປ້ອງກັນປະເທດ, ການປ້ອງກັນຄວາມສະຫງົບ, ຂະບວນການສືບສວນສອບສວນ, ຂະບວນການຕັດສິນຄະດີການກະທຳຜິດ ທາງດ້ານດີຈີຕອນ ຫຼື ໄຊເບີ.

## ໝວດທີ 4
## ແຜນການ, ນິຕິກຳ ແລະ ການຮ່ວມມື ຫັນເປັນດີຈີຕອນ

**ມາດຕາ 41 ການສ້າງແຜນການຫັນເປັນດີຈີຕອນ**

ການສ້າງແຜນພັດທະນາ ແລະ ຫັນເປັນດີຈີຕອນຕ້ອງຄຳນຶງເຖິງການພັດທະນາຮອບດ້ານ ຂອງອົງກອນ, ປະຊາຊົນ, ຂະບວນການ, ການນຳໃຊ້ເຕັກໂນໂລຊີ, ສິ່ງແວດລ້ອມ ແລະ ອື່ນໆ ໂດຍໃຫ້ປະກອບມີ:

1. ວິໄສທັດ: ສະແດງໃຫ້ເຫັນເຖິງເປົ້າໝາຍຂອງອົງກອນ ສຳລັບການຫັນເປັນດີຈີຕອນ ເຊັ່ນ: ຈຸດປະສົງ ແລະ ເປົ້າໝາຍ ໄລຍະສັ້ນ ແລະ ໄລຍະຍາວທີ່ຕ້ອງການຈະບັນລຸ;
2. ຍຸດທະສາດ: ກຳນົດຂັ້ນຕອນສະເພາະທີ່ອົງກອນຈະປະຕິບັດ ເພື່ອ ບັນລຸວິໄສທັດຂອງຕົນ ໂດຍອາດລວມເຖິງການລົງທຶນໃນເຕັກໂນໂລຊີໃໝ່, ການປັບປຸງຂະບວນການ, ການຍົກລະດັບຄວາມຮູ້ຄວາມສາມາດໃຫ້ຜູ້ບໍລິຫານ ແລະ ພະນັກງານ;
3. ແຜນ Road Map: ການົດເວລາໃນການຈັດຕັ້ງປະຕິບັດຍຸດທະສາດ ໂດຍກຳນົດວຽກຈຸດສຸມ ແລະ ວຽກສຳຄັນທີ່ຕ້ອງການທີ່ຈະບັນລຸ;
4. ການຄຸ້ມຄອງ: ສ້າງກົນໄກເພື່ອຈັດຕັ້ງປະຕິບັດ ເຊັ່ນ: ການສ້າງຕັ້ງຄະນະກຳມະການຊີ້ນຳ ຫຼື ໜ່ວຍງານຮັບຜິດຊອບຈັດຕັ້ງປະຕິບັດ, ກວດກາຕິດຕາມຊຸກຍູ້, ປະເມີນວັດແທກຜົນສຳເລັດ ແລະ ອື່ນໆ.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ, ບັນດາຫົວໜ່ວຍຜູ້ປະກອບການທຸລະກິດ ຕ້ອງສ້າງແຜນການຫັນເປັນດີຈີຕອນຂອງຕົນ ທັງໄລຍະສັ້ນ ແລະ ໄລຍະຍາວ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດ ແລະ ແຜນແມ່ບົດກ່ຽວກັບລັດຖະບານດີຈີຕອນ, ເສດຖະກິດດີຈີຕອນ ແລະ ສັງຄົມດີຈີຕອນ ພ້ອມທັງຜັນຂະຫຍາຍ ເປັນໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ.

**ມາດຕາ 42 ການປັບປຸງລະບົບນິຕິກຳ**

ການນຳໃຊ້ເຕັກໂນໂລຊີດິຈິຕອນ ແມ່ນກໍ່ໃຫ້ເກີດມີທັງຜົນດ້ານດີ ແລະ ຜົນດ້ານເສຍ ຊຶ່ງອາດເປັນອັນຕະລາຍແກ່ຜູ້ໃຊ້ ແລະ ສັງຄົມ. ດັ່ງນັ້ນຕ້ອງມີລະບຽບຄຸ້ມຄອງທີ່ຮັດກຸມ ເພື່ອປົກປ້ອງບຸກຄົນ ແລະ ສັງຄົມຈາກຜົນກະທົບທາງລົບຂອງເຕັກໂນໂລຊີດິຈິຕອນ.

ທຸກຂະແໜງການຕ້ອງໄດ້ທົບທວນບັນດານິຕິກຳຂອງຕົນທີ່ມີຢູ່ຫາກແມ່ນວ່າບໍ່ທັນສອດຄ່ອງ ຫຼື ຍັງມີລັກສະນະກີດກັນຕໍ່ກັບການຊ່ວຍໃຫ້ວຽກງານການຫັນເປັນດິຈິຕອນ ແມ່ນໃຫ້ຄົ້ນຄ້ວາປັບປຸງ ຫຼື ສ້າງໃໝ່ຫາກເຫັນວ່າຍັງບໍ່ທັນມີ, ໂດຍການປັບປຸງ ແລະ ສ້າງນິຕິກຳ ເພື່ອການຮອງຮັບການຫັນເປັນດິຈິຕອນຈະຕ້ອງເຮັດຢ່າງເປັນລະບົບຄົບຊຸດ ໃຫ້ຮັບຮູ້ ແລະ ຮອງຮັບ ສາມເສົາຄ້ຳ (ດ້ານເສດຖະກິດ, ສັງຄົມ, ບໍລິຫານລັດ) ເຊັ່ນ: ລົບບົບນິຕິກຳຮອງຮັບ ແລະ ຊ່ວຍຫັນ: ດ້ານບຸກຄະລາກອນ, ດ້ານຍຸດຕິທຳ,ດ້ານການສືບສວນສອບສວນ, ການພິສູດຊອກຫາຫຼັກຖານ, ການດຳເນີນຄະດີ, ການດຳເນີນງານ, ການເງິນ, ການຄ້າ, ການບໍລິການ ແລະ ອື່ນໆ ແບບມີລັກສະນະສົ່ງເສີມໃຫ້ແກ່ວຽກງານການຫັນເປັນດິຈິຕອນ.

**ມາດຕາ 43 ການຮ່ວມມື**

ການຮ່ວມມືລະຫວ່າງລັດຖະບານກັບລັດຖະບານ ເພື່ອການສະໜອງ, ຊ່ວຍເຫຼືອດ້ານເຕັກນິກ, ວິຊາການ ຫຼື ສະໜອງທຶນໃຫ້ແກ່ໂຄງການຫັນເປັນດິຈິຕອນ.

ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ເພື່ອພັດທະນາ, ຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ ກ່ຽວກັບວຽກງານດ້ານຫັນເປັນດິຈິຕອນ ໂດຍການລົງທຶນຂອງພາກເອກະຊົນ.

ການຮ່ວມມືຫຼາຍຝ່າຍ ຊຶ່ງອາດປະກອບມີອົງການຈັດຕັ້ງສາກົນ ທີ່ສະໜອງ ແລະ ໃຫ້ການຊ່ວຍເຫຼືອດ້ານການເງິນ ແລະ ດ້ານວິຊາການ.

ລັດຖະບານສົ່ງເສີມໃຫ້ບັນດາຂະແໜງການທັງພາກລັດ ແລະ ເອກະຊົນ ພົວພັນຮ່ວມມື ກັບບັນດາປະເທດໃນພາກພື້ນ ແລະ ສາກົນ ເພື່ອຍາດແຍ່ງ ດ້ານການສຳມະນາແລກປ່ຽນບົດຮຽນຄວາມຮູ້ວິຊາການ, ຊ່ຽວຊານ, ຄົ້ນຄ້ວາວິໄຈ, ດຶງດູດເງິນລົງທຶນ, ແຫຼ່ງທຶນຊ່ວຍ ແລະ ອື່ນໆ ທີ່ເປັນປະໂຫຍດ, ສ້າງຄວາມເຂັ້ມແຂງ ຕໍ່ກັບວຽກງານການພັດທະນາ ແລະ ຫັນເປັນດິຈິຕອນ ຂອງ ສປປ ລາວ.

## ພາກທີ IV
## ການລົງທຶນ ແລະ ແຫຼ່ງທຶນຫັນເປັນດິຈິຕອນ

**ມາດຕາ 44 ການລົງທຶນ**

ການລົງທຶນໃນວຽກງານການຫັນເປັນດິຈິຕອນ ໃຫ້ສຸມໃສ່ວຽກງານ ດັ່ງນີ້:

1. ການສ້າງ, ບຳລຸງຮັກສາ ແລະ ປັບປຸງໂຄງລ່າງພື້ນຖານເຕັກໂນໂລຊີດິຈິຕອນ;
2. ການພັດທະນາບຸກຄະລາກອນ ດ້ານເຕັກໂນໂລຊີດິຈິຕອນ;
3. ການພັດທະນາ ພລັດຟອມ, ຜະລິດຕະພັນ ແລະ ການບໍລິການ ເພື່ອສົ່ງເສີມການພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ;
4. ການສ້າງຄວາມປອດໄພທາງໄຊເບີ;

**ມາດຕາ 45 ແຫຼ່ງທຶນຫັນເປັນດິຈິຕອນ**

ລັດຖະບານ ຈັດສັນງົບປະມານປະຈຳປີ ເຂົ້າໃນວຽກງານການຫັນເປັນດິຈິຕອນ ບົນພື້ນຖານການສະເໜີ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ.

ລັດຊຸກຍູ້ສົ່ງເສີມໃຫ້ມີການສ້າງຕັ້ງກອງທຶນ ຫຼື ນຳໃຊ້ງົບປະມານຈາກກອງທຶນທີ່ມີຢູ່ ເພື່ອນຳໃຊ້ເຂົ້າໃນວຽກງານການພັດທະນາຫັນລັດຖະບານດີຈີຕອນ, ການພັດທະນາເສດຖະກິດດີຈີຕອນ ແລະ ພັດທະນາສັງຄົມດີຈີຕອນ

**ມາດຕາ 46 ນະໂຍບາຍການລົງທຶນ**

ບັນດາພາກສ່ວນທີ່ມີການລົງທຶນເຂົ້າໃນວຽກງານການພັດທະນາລັດທະບານດີຈີຕອນ, ເສດຖະກິດດີຈີຕອນ ແລະ ສັງຄົມດີຈີຕອນ ຈະໄດ້ຮັບນະໂຍບາຍ ດ້ານງົບປະມານ, ພາສີອາກອນ ແລະ ອື່ນໆ ຕາມລະບຽບກົດໝາຍ

## ພາກທີ V
## ຂໍ້ຫ້າມ

**ມາດຕາ 47 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ກີດຂວາງ, ຂັດຂວາງ ການເຄື່ອນໄຫວວຽກງານການຫັນເປັນດີຈີຕອນ;
2. ນຳເອົາ, ເຂົ້າເຖິງ, ດັດແປງ, ທຳລາຍ ຫຼື ເຜີຍແຜ່ ຂໍ້ມູນຂອງລັດ ທີ່ກ່ຽວກັບວຽກງານການຫັນເປັນດີຈີຕອນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ໂຄສະນາ, ໃສ່ຮ້າຍປ້າຍສີ ກ່ຽວກັບວຽກງານການຫັນເປັນດີຈີຕອນ;
4. ຮ່ວມມື, ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ໃນການລະເມີດດຳລັດສະບັບນີ້ ຫຼື ລະບຽບການອື່ນທີ່ກ່ຽວຂ້ອງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 48 ຂໍ້ຫ້າມສຳລັບເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຫຼື ການຈັດຕັ້ງລັດ**

ຫ້າມ ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຫຼື ການຈັດຕັ້ງລັດ ມີພຶດຕິກຳ ດັ່ງນີ້:

1. ເຂົ້າເຖິງຖານຂໍ້ມູນທີ່ເກັບຮັກສາ ຂໍ້ມູນ ຂ່າວສານ ທີ່ເປັນຄວາມລັບທາງລັດຖະການ ກ່ຽວກັບວຽກງານການຫັນເປັນດີຈີຕອນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳເອົາ, ດັດແປງ, ທຳລາຍ ຫຼື ເຜີຍແຜ່ ຂໍ້ມູນ ຂ່າວສານ ທີ່ເປັນຄວາມລັບທາງລັດຖະການ ກ່ຽວກັບວຽກງານການຫັນເປັນດີຈີຕອນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອສະແຫວງຫາຜົນປະໂຫຍດ ສ່ວນຕົວ, ຄອບຄົວ ແລະ ພັກພວກ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ທີ່ການຈັດຕັ້ງມອບໝາຍໃຫ້;
5. ມອບສິດ ແລະ ໜ້າທີ່ ທີ່ຕົນຮັບຜິດຊອບ ໃຫ້ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກການຈັດຕັ້ງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

# ພາກທີ VI
# ການຄຸ້ມຄອງ ແລະ ກວດກາ ວຽກງານການຫັນເປັນດິຈິຕອນ

**ມາດຕາ 49 ອົງການຄຸ້ມຄອງ ແລະ ກວດກາວຽກງານການຫັນເປັນດິຈິຕອນ**

ລັດຖະບານ ເປັນຜູ້ຄຸ້ມຄອງ ແລະ ກວດກາວຽກງານຫັນເປັນດິຈິຕອນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ແລະ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ບັນດາອານຸກຳມະການສະເພາະດ້ານ ທີ່ໄດ້ຮັບການແຕ່ງຕັ້ງຈາກຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ. ລາວ ເພື່ອເຮັດໜ້າທີ່ສະເພາະດ້ານ ເປັນຕົ້ນ:

1. ອານຸກຳມະການໂຄງລ່າງພື້ນຖານດິຈິຕອນ;
2. ອານຸກຳມະການໂຄສະນາເຜີຍແຜ່ ແລະ ສົ່ງເສີມການຫັນເປັນດິຈິຕອນ;
3. ອານຸກຳມະການຫັນລັດຖະບານເປັນດິຈິຕອນ;
4. ອານຸກຳມະການຫັນເສດຖະກິດເປັນດິຈິຕອນ;
5. ອານຸກຳມະການຫັນສັງຄົມເປັນດິຈິຕອນ;
6. ຫ້ອງການຄະນະກຳມະການລະດັບຊາດເພື່ອການຫັນເປັນດິຈິຕອນຂອງ ສປປ ລາວ;
7. ອື່ນໆ.

**ມາດຕາ 50 ສິດ ແລະ ໜ້າທີ່ຂອງຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ**

ໃນການຄຸ້ມຄອງວຽກງານການຫັນເປັນດິຈິຕອນ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດນິຕິກຳຂອງ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານ ວາງອອກຢ່າງເຂັ້ມງວດ;
2. ປະຕິບັດພາລະບົດບາດຕາມທີ່ກຳນົດໄວ້ໃນມາດຕາ 2 ຂອງລັດຖະດຳລັດ ຂອງປະທານປະເທດ ແຫ່ງ ສປປ ລາວ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ;
3. ຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດແນວທາງ, ຍຸດທະສາດ, ກົນໄກ ແລະ ນະໂຍບາຍຊຸກຍູ້ ສົ່ງເສີມການຫັນເປັນດິຈິຕອນ ຂອງ ສປປ ລາວ, ບົນພື້ນຖານການປະຕິຮູບ ແລະ ການພັດທະນາລັດຖະບານດິຈິຕອນ , ເສດຖະກິດດິຈິຕອນ, ສັງຄົມດິຈິຕອນ, ປະກອບຄຳເຫັນຕໍ່ການຈັດຕັ້ງປະຕິບັດຍຸດທະສາດ, ແຜນງານ, ກົນໄກ, ນະໂຍບາຍ, ບັນດາໂຄງການກ່ຽວກັບການພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ, ສັງຄົມດິຈິຕອນ, ສ້າງເງື່ອນໄຂສະດວກໃຫ້ແກ່ການຫັນເປັນດິຈິຕອນຂອງ ສປປ ລາວ;
4. ຊີ້ນຳບັນດາອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ ປະຕິບັດບັນດາເປົ້າໝາຍການຫັນເປັນດິຈິຕອນ, ການພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ; ຊີ້ນຳບັນດາພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດຍຸດທະສາດ, ນະໂຍບາຍ, ແຜນງານ, ກົນໄກ, ບັນດາໂຄງການກ່ຽວກັບການຫັນເປັນດິຈິຕອນ, ພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ; ຕິດຕາມ ແລະ ສົມທົບກັນຈັດຕັ້ງປະຕິບັດໂຄງການຫັນເປັນດິຈິຕອນ, ບັນດາເນື້ອໃນທີ່ກ່ຽວຂ້ອງກັບວິໄສທັດການພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 20 ປີ (2021-2040) ຍຸດທະສາດການພັດທະນາ

ເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 10 ປີ (2021-2030) ແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 5 ປີ (2021-2025);

5. ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດຍຸດທະສາດ, ນະໂຍບາຍ, ແຜນງານ, ໂຄງການ, ກົນໄກ ກ່ຽວກັບການຫັນເປັນດິຈິຕອນ, ການພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ; ຊຸກຍູ້ການຈັດຕັ້ງປະຕິບັດໂຄງການຫັນເປັນດິຈິຕອນຂອງ ສປປ ລາວ, ປະເມີນຕີລາຄາສະພາບການ ແລະ ຜົນການປະຕິບັດບັນດາໜ້າວຽກທີ່ສຳຄັນ ໃນການຫັນເປັນດິຈິຕອນຂອງ ສປປ ລາວ;

6. ແຕ່ງຕັ້ງຄະນະຊ່ວຍວຽກຕົນໃນກໍລະນີມີຄວາມຈຳເປັນ;

7. ຈັດກອງປະຊຸມສາມັນທຸກໆ 6 ເດືອນ ແລະ ກອງປະຊຸມວິສາມັນຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ເພື່ອສະຫຼຸບວາງແຜນ ກຳນົດທິດທາງໜ້າທີ່ວຽກທີ່ເປັນຈຸດສຸມຂອງການພັດທະນາວຽກງານດິຈິຕອນໃນແຕ່ລະໄລຍະ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ.

### ມາດຕາ 51 ສິດ ແລະ ໜ້າທີ່ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ

ໃນການຄຸ້ມຄອງວຽກງານຫັນເປັນດິຈິຕອນ ກະຊວງ ເຕັກໂນໂລຊີ ການສື່ສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງຮ່າງ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບການຫັນເປັນດິຈິຕອນ ເພື່ອສະເໜີລັດຖະບານ ພິຈາລະນາ ຮັບຮອງ;

2. ຈັດຕັ້ງ ແລະ ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບການຫັນເປັນດິຈິຕອນ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ຂອງຕົນ, ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບການຫັນເປັນດິຈິຕອນ ໃຫ້ສັງຄົມຢ່າງກວ້າງຂວາງ ແລະ ທົ່ວເຖິງ;

4. ຄົ້ນຄວ້າ ກຳນົດມາດຕະຖານເຕັກນິກ, ເລືອກເຟັ້ນເຕັກໂນໂລຊີ ແລະ ວັດຖຸປະກອນ ທີ່ຮັບປະກັນທາງດ້ານຄວາມປອດໄພ ເພື່ອນຳໃຊ້ເຂົ້າໃນວຽກງານການຫັນເປັນດິຈິຕອນ;

5. ເປັນໃຈກາງປະສານສົມທົບກັບ ກະຊວງ, ອົງການ ທີ່ກ່ຽວຂ້ອງ ໃນການສ້າງ, ນຳໃຊ້ ແລະ ພັດທະນາລະບົບການຢັ້ງຢືນຕົວຕົນທາງດິຈິຕອນ, ລະບົບເຕັກໂນໂລຊີກຸ່ມຂໍ້ມູນຜູກພັນແຫ່ງຊາດ ໃນວຽກງານການຫັນເປັນດິຈິຕອນ;

6. ເປັນກອງເລຂາຊ່ວຍຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດວຽກງານຫັນເປັນດິຈິຕອນ ຂອບເຂດທົ່ວປະເທດ;

7. ຝຶກອົບຮົມ, ຍົກລະດັບ ຄວາມຮູ້ ຄວາມສາມາດດ້ານເຕັກໂນໂລຊີດິຈິຕອນ ທີ່ນຳໃຊ້ໃນວຽກງານຫັນເປັນດິຈິຕອນໃຫ້ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

8. ຄົ້ນຄວ້າ ອອກລະບຽບການບໍລິການ ແລະ ນຳໃຊ້ ລະບົບເຕັກໂນໂລຊີກຸ່ມຂໍ້ມູນຜູກພັນ ແຫ່ງຊາດໃນຂອບເຂດຄວາມຮັບຜິດຊອບຕົນ;

9. ພົວພັນຮ່ວມມື ກັບອົງການຈັດຕັ້ງລັດ ແລະ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານການຫັນເປັນດິຈິຕອນ;

10. ເກັບກຳຂໍ້ມູນ, ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານການຫັນເປັນດິຈິຕອນ ຕໍ່ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 52 ສິດ ແລະ ໜ້າທີ່ຂອງ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານການຫັນເປັນດິຈິຕອນ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະຕິບັດວຽກງານການຫັນເປັນດິຈິຕອນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບ ກະຊວງເຕັກໂນໂລຊີ ແລະ ການສື່ສານ.

**ມາດຕາ 53 ເນື້ອໃນການກວດກາວຽກງານການຫັນເປັນດິຈິຕອນ**

ການກວດກາວຽກງານການຫັນເປັນດິຈິຕອນ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານການຫັນເປັນດິຈິຕອນ;
2. ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານການຫັນເປັນດິຈິຕອນ;
3. ການເຄື່ອນໄຫວວຽກງານ ຂອງອົງການຄຸ້ມຄອງວຽກງານການຫັນເປັນດິຈິຕອນ ແລະ ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ການດຳເນີນວຽກງານການຫັນເປັນດິຈິຕອນ;
5. ເນື້ອໃນອື່ນທີ່ກ່ຽວຂ້ອງ.

**ມາດຕາ 54 ຮູບການກວດກາວຽກງານການຫັນເປັນດິຈິຕອນ**

ການກວດກາວຽກງານການຫັນເປັນດິຈິຕອນ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິແມ່ນ ການກວດກາທີ່ດຳເນີນແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 55 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຈັດຕັ້ງປະຕິບັດວຽກງານການຫັນເປັນດິຈິຕອນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 56 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

# ພາກທີ VIII
# ບົດບັນຍັດສຸດທ້າຍ

**ມາດຕາ 57 ວັນດີຈີຕອນ**

ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈີຕອນ ຂອງ ສປປ ລາວ ຄົ້ນຄ້ວາ ສະເໜີກຳນົດວັນດີຈີຕອນ ແຫ່ງຊາດ ເພື່ອສົ່ງເສີມ, ສ້າງຈິດສຳນຶກ ແລະ ຍົກລະດັບຄວາມຕື່ນຕົວ ໃນການຫັນເປັນດີຈີຕອນ ຂອງທຸກພາກສ່ວນໃນສັງຄົມ.

ໃນແຕ່ລະປີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຕ້ອງສ້າງຂະບວນການ ແລະ ຈັດພິທີສະເຫຼີມສະຫຼອງວັນສັບປະດາດີຈີຕອນ ດ້ວຍຮູບການທີ່ເໝາະສົມ.

**ມາດຕາ 58 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈີຕອນ ຂອງ ສປ ປລາວ ປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 59 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ.............................. ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປລາວ**
**ນາຍົກລັດຖະມົນຕີ**